ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສາລະວັນ

ເລກທີ..03....../ຈຂ.ສວ

ສາລະວັນ, ວັນທີ.17..03..2020

# ຄໍາສັ່ງ

ວ່າດ້ວຍ: ການປິດດ່ານປະເພນີ ແລະ ປ້ອມເຂົ້າ - ອອກ ເປັນການຊົ່ວຄາວ ໃນໄລຍະການລະບາດ ຂອງພະຍາດ ໂຄວິດ - 19 ( COVID-19).

ເຖິງ: ພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ລັດວິສາຫະກິດ ພາກລັດ ແລະ ເອກະຊົນ ອ້ອມຂ້າງແຂວງ, ບັນດາເມືອງ, ໜູ່ບ້ານ ຕະຫຼອດຮອດຄອບຄົວ, ພໍ່ແມ່ປະຊາຊົນ ທົ່ວແຂວງສາລະວັນ.

- ອີງຕາມ ໜັງສືແຈ້ງການ ຂອງຄະນະສະເພາະກິດ ເພື່ອປ້ອງກັນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ - 19 ( COVID-19 ), ສະບັບເລກທີ 005/ສພກ, ລົງວັນທີ 02 ມີນາ 2020.
- ອີງຕາມ ທິດຊີ້ນໍາຂອງທ່ານ ເລຂາພັກ - ເຈົ້າແຂວງສາລະວັນ ຄັ້ງວັນທີ 13 ມີນາ 2020.

ເພື່ອເປັນການເຝົ້າລະວັງ, ປ້ອງກັນ ແລະ ສະກັດກັ້ນ ບໍ່ໃຫ້ເກີດມີກໍລະນີຕິດເຊື້ອ ແລະ ການລະບາດຂອງພະຍາດ ໂຄວິດ - 19 (COVID-19) ຢູ່ ແຂວງສາລະວັນ.

## ເຈົ້າແຂວງສາລະວັນ ອອກຄໍາສັ່ງ:

ໃຫ້ປິດດ່ານປະເພນີເຂົ້າ - ອອກຊົ່ວຄາວ ທົ່ວແຂວງສາລະວັນ ທີ່ມີຊາຍແດນຕິດຈອດກັບ ສສ ຫວຽດນາມ ແລະ ລາຊະອານາຈັກໄທ ເພື່ອປ້ອງກັນບໍ່ໃຫ້ເກີດມີກໍລະນີຕິດເຊື້ອ ແລະ ການແຜ່ລະບາດຂອງພະຍາດ COVID-19 ເຊິ່ງລາຍລະອຽດໃຫ້ປະຕິບັດດັ່ງນີ້:

1. ປິດດ່ານປະເພນີ, ປ້ອມຊາຍແດນຕິດຈອດລະຫວ່າງແຂວງສາລະວັນ ກັບ ສສ ຫວຽດນາມ ແລະ ແຂວງສາລະວັນ ກັບລາຊະອານາຈັກໄທຄື:

+ ດ່ານປະເພນີ ແລະ ປ້ອມ ລະຫວ່າງ ແຂວງສາລະວັນ ກັບ ສສ ຫວຽດນາມ:
  - ດ່ານປະເພນີໄກະດ່າຍ - ຄົງເອີນ.
  - ດ່ານປະເພນີອາສິກ - ກ່ອກ
  - ປ້ອມອາຈາ
  - ແລະ ຈຸດອື່ນໆ ຕາມໜູ່ບ້ານເຊິ່ງໜ້າຊາຍແດນລາວ - ຫວຽດນາມ.
+ ດ່ານປະເພນີ ແລະ ປ້ອມ ລະຫວ່າງ ແຂວງສາລະວັນ ກັບ ລາຊະອານາຈັກໄທ:
  - ດ່ານປະເພນີຄັນທຸງໄຊ.
  - ປ້ອມບ້ານຄອງຫຼວງ
  - ປ້ອມບ້ານສະໂນມ
  - ປ້ອມບ້ານທົ່ງຊາຍທອງ
  - ປ້ອມບ້ານນາໄຊສີ
  - ປ້ອມບ້ານດອນໝາກເດືອ

- ປ້ອມບ້ານເຫົ້າຫຍ້າພົດ - ປາກເຊືອເຖື່ອນ
- ປ້ອມບ້ານທ່າກັນຊຸມສົ້ວ
- ປ້ອມບ້ານຄຳຄໍ້
- ແລະ ຈຸດອື່ນໆຕາມໝູ່ບ້ານເຂດໜ້າຊາຍແດນລາວ - ໄທ.

໒. ຖ້າວ່າມີຄວາມຈຳເປັນໃນການເຂົ້າ - ອອກ ຂອງປະຊາຊົນ, ນິຕິບຸກຄົນ ທີ່ດຳລົງຊີວິດຕາມບໍລິເວນຊາຍແດນ ເມືອງ ສສ ຫວຽດນາມ ແມ່ນໃຫ້ເຂົ້າ - ອອກ ຜ່ານດ່ານສາກົນລະໄລ, ສ່ວນຊາຍແດນເມືອງ ລາຊະອານາຈັກໄທ ແມ່ນໃຫ້ເຂົ້າ - ອອກ ຜ່ານດ່ານທ້ອງຖິ່ນປາກຕະພານ.

໓. ໃຫ້ດ່ານສາກົນລະໄລ ປິດການນຳເຂົ້າພາຫະນະລົດຈັກ ທີ່ນຳເອົາສິນຄ້າເຂົ້າມາຄ້າ - ຂາຍ ຢູ່ຕາມບໍລິເວນຊາຍແດນເມືອງສະໝ້ວຍ ແລະ ຈຸດອື່ນໆ ຢ່າງເຂັ້ມງວດ.

໔. ມອບໃຫ້ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເຈົ້າໜ້າທີ່ຮັບຜິດຊອບໃນແຕ່ລະດ່ານ - ແຕ່ລະປ້ອມ ຕິດຕາມ, ກວດກາ ຢ່າງເຂັ້ມງວດ ແລະ ເດັດຂາດ, ພ້ອມນັ້ນ; ໃຫ້ສຸມກຳລັງໄປປະຈຳແຕ່ລະຈຸດທີ່ມີຄວາມສ່ຽງ ໃຫ້ຄົບຖ້ວນ ແລະ ພຽງພໍ.

໕. ມອບໃຫ້ພະແນກສາທາລະນະສຸກແຂວງ ສຸມກຳລັງແພດໝໍ ລົງປະຈຳຢູ່ດ່ານສາກົນລະໄລ, ດ່ານທ້ອງຖິ່ນປາກຕະພານ ແລະ ຈຸດອື່ນໆ ທີ່ມີຄວາມສ່ຽງ, ໃຫ້ເຂັ້ມງວດໃນການປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມພະຍາດ ຢ່າງເຂັ້ມງວດ, ພ້ອມທັງເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ພະຍາດ COVID-19 ຢ່າງທົ່ວເຖິງ.

໖. ມອບໃຫ້ພະແນກການຕ່າງປະເທດແຂວງ ຮີບຮ້ອນປະສານ ແລະ ແຈ້ງໄປຍັງພະແນກການຕ່າງປະເທດ ຂອງ ບັນດາແຂວງຂອງ ສສຫວຽດນາມ ແລະ ລາຊະອານາຈັກໄທ ທີ່ມີຊາຍແດນຕິດຈອດກັບແຂວງສາລະວັນ ເຂົ້າໃຈເຖິງຈຸດປະສົງ ແລະ ໃຫ້ການຮ່ວມມືໃນການປິດດ່ານປະເພນີຊົ່ວຄາວຄັ້ງນີ້ດ້ວຍ.

໗. ມອບໃຫ້ຫ້ອງການຄຸ້ມຄອງດ່ານສາກົນລະໄລ ຊີ້ນຳພາເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ປະຈຳຢູ່ດ່ານ ໃຫ້ ການຮ່ວມມື ແລະ ຊ່ວຍເຫຼືອເຈົ້າໜ້າທີ່ພະນັກງານ ແພດໝໍ ໃນການປະຕິບັດໜ້າທີ່ວິຊາສະເພາະ ຢູ່ຈຸດດັ່ງກ່າວ ໃຫ້ໄດ້ຮັບຜົນດີ.

໘. ໃຫ້ບັນດາພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ເມືອງ ໐໘ ຕົວເມືອງ ແຈ້ງໃຫ້ບັນດາພະນັກງານ - ສະມາຊິກພັກ, ກຳລັງປະກອບອາວຸດ ແລະ ພໍ່ແມ່ປະຊາຊົນ ໃຫ້ຮັບຮູ້, ເຂົ້າໃຈ ແລະ ເອົາໃຈໃສ່ປ້ອງກັນ ແລະ ຄວບຄຸມພະຍາດດັ່ງກ່າວ.

໙. ການປິດດ່ານປະເພນີ ແລະ ປ້ອມເຂົ້າ - ອອກ ລະຫວ່າງແຂວງສາລະວັນ ກັບ ສສ ຫວຽດນາມ ແລະ ແຂວງສາລະວັນ ກັບ ລາຊະອານາຈັກໄທນີ້ ແມ່ນເປັນການປິດຊົ່ວຄາວ ໃນໄລຍະການລະບາດ ຂອງພະຍາດ ໂຄວິດ - ໑໙(COVID-19) ເທົ່ານັ້ນ, ເມື່ອສະພາບການເປັນປົກກະຕິ ແມ່ນຈະໄດ້ເປີດນຳໃຊ້ຄືນຄືເກົ່າ, ໂດຍທີ່ແຂວງຈະໄດ້ແຈ້ງຢ່າງເປັນທາງການ ຈຶ່ງຖືວ່າຖືກຕ້ອງ.

໑໐. ຄຳສັ່ງສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງສາລະວັນ

+ ບ່ອນນຳສົ່ງ:

໑. ເມືອງລະ ໐໑ ສະບັບ;
໒. ພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ ລະ ໐໑ ສະບັບ;
໓. ບໍລິສັດ, ລັດວິສາຫະກິດລະ ໐໑ ສະບັບ;
໔. ເກັບສຳເນົາໄວ້ ໐໑ ສະບັບ.

ພູທົງ ຄຳມະນີວົງ
Phouthong KHAMMANEVONG